**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສຳນັກນາຍົກລັດຖະມົນຕີ

ເລກທີ 250/ນຍ

ນະຄອນຫລວງວຽງຈັນ, ວັນທີ: 13.05.2010

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ຍຸດທະສາດ ການພັດທະນາລະບົບສະຖິຕິແຫ່ງຊາດ 2010-2020

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງລະບົບສະຖິຕິແຫ່ງຊາດ ສະບັບເລກທີ 140/ນຍ, ລົງວັນທີ 20 ສິງຫາ 2002.
- ອີງຕາມການຕົກລົງ ແລະຊີ້ນຳ ຂອງປະຊຸມລັດຖະບານ ຄັ້ງວັນທີ 2-3 ກຸມພາ 2010
- ອີງຕາມ ເອກະສານສະເໜີຂອງລັດຖະມົນຕີວ່າການ ກະຊວງແຜນການ ແລະການລົງທຶນ ສະບັບ ເລກທີ 897/ຜທ, ລົງວັນທີ 05.05.2010

ນາຍົກລັດຖະມົນຕີ ອອກດຳລັດ :

ມາດຕາ 1 : ຮັບຮອງ ແລະ ປະກາດໃຊ້ ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ 2010-2020

ມາດຕາ 2 : ໃຫ້ກະຊວງແຜນການ ແລະການລົງທຶນ ເປັນເຈົ້າການປະສານສົມທົບ ກັບບັນດາກະຊວງທີ່ກ່ຽວຂ້ອງ ຄົ້ນຄວ້າ ຜັນຂະຫຍາຍ ແລະຈັດຕັ້ງປະຕິບັດ.

ມາດຕາ 3 : ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫລວງ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະຈັດຕັ້ງປະຕິບັດ ດຳລັດສະບັບນີ້ໃຫ້ໄດ້ຮັບຜົນເປັນຢ່າງດີ

ມາດຕາ 4 : ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ

**ບົວສອນ ບຸບຜາວັນ**